University of Basel

# Gender and Labour in the Global South

## Article – Laotian

This translation is for a better understanding of the English texts. We are very happy if you join the discussions. Please note that all contributions in the comment section and in the discussion steps need to be in English.

**COVID-19: deepening inequalities in a global pandemic**

ໂຄວິດ 19: ຄວາມບໍ່ສະເໝີພາບເທົ່າທຽມກັນທີ່ເພີ່ມທະວີຮຸນແຮງຂຶ້ນໃນການລະບາດຄັ້ງໃຫຍ່ຂອງໂລກ

**Short description:**
ອ່ານວິທີທີ່ Yamila Pita ອະທິບາຍເຖິງບັນດາຜົນກະທົບທາງດ້ານເສດຖະກິດ-ສັງຄົມ ແລະ ຜົນກະທົບທາງດ້ານເພດຂອງວິກິດໂຄວິດ 19.

**Content:**

ການແຜ່ລະບາດຂອງພະຍາດໂຄວິດ 19 ຢ່າງຕໍ່ເນື່ອງ ບໍ່ພຽງແຕ່ເປັນວິກິດທາງດ້ານສຸຂະພາບເທົ່ານັ້ນ ແຕ່ຍັງເປັນວິກິດທາງດ້ານເສດຖະກິດ-ສັງຄົມນໍາອີກ (Kabeer et al., 2021) ທີ່ບໍ່ສົ່ງຜົນກະທົບຕໍ່ປະຊາຊົນທຸກຄົນເທົ່າທຽມກັນ. ໃນຂະນະທີ່ຜົນກະທົບທັງໝົດຂອງການລະບາດໃຫຍ່ໃນຄັ້ງນີ້ ຍັງບໍ່ທັນສາມາດຮັບຊາບໄດ້ຈັດເຈນ ແລະ ຈໍາເປັນຕ້ອງໄດ້ມີການສຶກສາຢ່າງເໝາະສົມໃນອະນາຄົດ (Seck et al., 2021)[1], ສາມາດເວົ້າໄດ້ຢ່າງປອດໄພເລີຍວ່າ ວິກິດລະດັບໂລກໃນຄັ້ງນີ້ ເຮັດໃຫ້ຄວາມບໍ່ສະເໝີພາບເທົ່າທຽມກັນທີ່ມີຢູ່ແລ້ວນັ້ນເລິກເຊິ່ງລົງໄປອີກ. ນີ້ແມ່ນເຫັນໄດ້ຈັດເຈນ ໂດຍສະເພາະ ໃນກໍລະນີຂອງຄວາມບໍ່ສະເໝີພາບເທົ່າທຽມກັນລະຫວ່າງຍິງ-ຊາຍ, ທີ່ເຊື່ອແນ່ນອນວ່າ ຕ້ອງໄດ້ເຂົ້າໃຈໃນສ່ວນທີ່ຕັດຜ່ານກັບຄວາມບໍ່ສະເໝີພາບໃນຮູບແບບອື່ນໆນໍາອີກ (ຕາມແລວຂອງ ຊົນຊັ້ນ, ເຊື້ອຊາດ, ເພດ ຫຼື ຊົນເຜົ່າ ເຫຼົ່ານີ້ເປັນຕົ້ນ). ເມື່ອເວົ້າເຖິງຜົນກະທົບທາງເພດຂອງການລະບາດຄັ້ງໃຫຍ່ຂອງໂຄວິດ 19 ໝາຍເຖິງການເວົ້າກ່ຽວກັບຜົນກະທົບທີ່ບໍ່ສົມດູນທີ່ວິກິດນີ້ໄດ້ມີ (ແລະ ມີຂຶ້ນຢ່າງຕໍ່ເນື່ອງ) ຕໍ່ກັບແມ່ຍິງ ໂດຍສະເພາະແມ່ຍິງທີ່ຢູ່ໃນກຸ່ມຄົນດ້ອຍໂອກາດຢ່າງເປັນລະບົບ. ດັ່ງທີ່ Kabeer ແລະ ຄະນະ (2021) ຊີ້ໃຫ້ເຫັນວ່າ ຜົນກະທົບເຫຼົ່ານີ້ ແມ່ນເຫັນໄດ້ໃນຫຼາຍຂອບເຂດ (domains). ຕົວຢ່າງ ແມ່ຍິງຫຼາຍກວ່າຜູ້ຊາຍ ທີ່ເຮັດວຽກໃນຂະແໜງການທີ່ໄດ້ຮັບຜົນກະທົບທີ່ຮຸນແຮງທີ່ສຸດທາງດ້ານເສດຖະກິດຈາກການລະບາດຂອງໂລກລະບາດນີ້ ແລະ ຈາກການປິດເມືອງຕ່າງໆ (ເຊັ່ນ: ກິດຈະກໍາການຄ້າປີກ ຫຼື ທີ່ກ່ຽວຂ້ອງກັບການທ່ອງທ່ຽວ). ນີ້ໄດ້ເຮັດໃຫ້ມີຈໍານວນຜູ້ສູນເສຍວຽກເຮັດງານທໍາເປັນແມ່ຍິງຫຼາຍກວ່າຜູ້ຊາຍຢູ່ໃນຫຼາຍປະເທດ. ນອກຈາກນີ້, ກຸ່ມຄົນປະຕິບັດງານດ່ານໜ້າ (ຕົວຢ່າງຜູ້ທີ່ເຮັດວຽກໃນຂະແໜງສຸຂະພາບ ແລະ ບໍລິການ) ແມ່ນມີຄວາມສ່ຽງຕິດເຊື້ອໂຄວິດຫຼາຍກວ່າ. ຜູ້ປະຕິບັດງານຫຼັກຢູ່ດ່ານໜ້າສ່ວນໃຫຍ່ນັ້ນແມ່ນແມ່ຍິງ.

---

[1] Papa A. Seck, Jessamyn O. Encarnacion, Cecilia Tinonin and Sara Duerto-Valero (2021). "Gendered Impacts of COVID-19 in Asia and the Pacific: Early Evidence on Deepening Socioeconomic Inequalities in Paid and Unpaid Work." *Feminist Economics*, 27 (1-2), pp. 117-132.

ກັບມາຫາຄຳຖາມ ຕໍ່ກັບຄຳສັ່ງ ຢູ່ເຮືອນຍຸດເຊື້ອ (ດ້ວຍການປິດໂຮງຮຽນ, ການຫຼຸດຜ່ອນການເຄື່ອນໄຫວ, ຄວາມອີ່ມຕົວຂອງລະບົບສາທາລະນະສຸກ): ມາດຕະການສະກັດກັ້ນການແຜ່ລະບາດ ເຮັດໃຫ້ເກີດການເພີ່ມຂຶ້ນຢ່າງບໍ່ປາກົດເຫັນມາກ່ອນໃນວຽກງານໃນເຮືອນ ແລະ ວຽກການດູແລເບິ່ງແຍງທີ່ບໍ່ໄດ້ຮັບຄ່າຈ້າງ. ພາລະອັນໃໝ່ເຫຼົ່ານີ້ໄດ້ຕົກມາສູ່ແມ່ຍິງຢ່າງບໍ່ສົມດູນ, ທີ່ມາພ້ອມກັບຜົນສະທ້ອນຕໍ່ສຸຂະພາບທາງຈິດໃຈ ແລະ ອາລົມຂອງແມ່ຍິງ (Kabeer et al., 2021; Seck et al., 2021). ຄວາມຖີ່ ແລະ ລະດັບຄວາມຮຸນແຮງຂອງຄວາມຮຸນແຮງຕາມເພດກໍເພີ່ມຂຶ້ນເຊັ່ນກັນ ເນື່ອງມາຈາກຜົນກະທົບທາງເສດຖະກິດ-ສັງຄົມທີ່ເກີດຈາກໂລກລະບາດນີ້: ການກັກຂັງເປັນເວລາດົນນານ, ຄວາມບໍ່ໝັ້ນຄົງທາງການເງິນທີ່ເພີ່ມຂຶ້ນ, ລະດັບຄວາມເຄັ່ງຕຶງ ແລະ ຄວາມອິດເມື່ອຍທາງດ້ານຈິດໃຈມີລະດັບສູງ ເຫຼົ່ານີ້ເປັນຕົ້ນ (Kabeer et al., 2021).

ການລະບາດຂອງພະຍາດໂຄວິດ 19 ບໍ່ພຽງແຕ່ສົ່ງຜົນກະທົບອັນຮ້າຍແຮງຕໍ່ຕະຫຼາດແຮງງານເທົ່ານັ້ນ ແຕ່ຍັງສົ່ງຜົນກະທົບໃນດ້ານລົບຕໍ່ກັບດ້ານອື່ນໆຂອງຊີວິດນຳອີກ. ນອກຈາກນີ້ ດັ່ງທີ່ໄດ້ກ່າວໄປແລ້ວວ່າ ວິກິດຄັ້ງນີ້ບໍ່ໄດ້ສົ່ງຜົນກະທົບຕໍ່ທຸກກຸ່ມຄົນໃນສັງຄົມ ແລະ ທຸກປະເທດເທົ່າທຽມກັນ ດັ່ງທີ່ Seck ແລະ ຄະນະ (2021) ໄດ້ລະບຸວ່າ ວິກິດການໃຈລະດັບໂລກນີ້ ມີຜົນທີ່ຕາມມາຢ່າງເລິກເຊິ່ງໃນດ້ານຄວາມແຕກຕ່າງທາງເພດ ຕະຫຼອດຮອດຜົນກະທົບທີ່ແຕກຕ່າງກັນໄປໃນບັນດາຂົງເຂດຕ່າງໆ.

ໃນຈຸດນີ້ ພວກເຮົາຈຳເປັນຕ້ອງຖາມຕົວເອງກ່ຽວກັບການຕອບສະໜອງດ້ານນະໂຍບາຍຂອງລັດ ແລະ ປະເພດຂອງເຄື່ອງມືທີ່ມີ ສຳລັບການຟື້ນຕົວຈາກວິກິດຄັ້ງນີ້. OXFAME ກ່າວວ່າ ການແຜ່ລະບາດລະດັບໂລກຄັ້ງນີ້ ໄດ້ເປີດເຜີຍຂໍ້ຈຳກັດທາງດ້ານການຂັບເຄື່ອນຕະຫຼາດ, ແນວທາງເສດຖະກິດເສລີນິຍົມ ເຊິ່ງໄດ້ທຳລາຍລະບົບສາທາລະນະສຸກ ແລະ ປະກັນສັງຄົມໃນທົ່ວໂລກ (OXFAM, 2014[2]; Kabeer et al., 2021). ກ່າວອີກຢ່າງໜຶ່ງກໍຄື, ວິກິດນີ້ໄດ້ສະແດງໃຫ້ເຫັນວ່າ ລັດຕ່າງໆ ມີຄວາມຮັບຜິດຊອບໃນການຕໍ່ສູ້ກັບຄວາມບໍ່ສະເໝີພາບເທົ່າທຽມກັນທີ່ຍັງຄົງຄ້າງຫຼາຍຢ່າງ ແລະ ປະຕິບັດມາດຕະການເພື່ອແນໃສ່ຫຼຸດຊ່ອງຫວ່າງທາງເພດ.

ຊຸດສຸກເສີນທີ່ອີງໃສ່ສະຫວັດດີການເພື່ອຫຼຸດຜ່ອນຜົນກະທົບຂອງວິກິດ ໃນໄລຍະສັ້ນແມ່ນບໍ່ພຽງພໍ, ເນື່ອງຈາກວ່ານັ້ນບໍ່ໄດ້ປ່ຽນແປງສະພາບເງື່ອນໄຂທາງໂຄງສ້າງທີ່ກໍ່ໃຫ້ເກີດຄວາມບໍ່ສະເໝີພາບເທົ່າທຽມກັນຕັ້ງແຕ່ທຳອິດ. ໃນຄວາມໝາຍດັ່ງກ່າວນີ້, ພວກເຮົາເຫັນດີນຳ Kabeer ແລະ ຄະນະ (2021) ທີ່ໂຕ້ແຍ້ງວ່າ ວິກິດແມ່ນຊ່ອງທາງສູ່ໂອກາດໃນການປ່ຽນແປງການກຳນົດນະໂຍບາຍ. ຈຳເປັນຕ້ອງສ້າງນະໂຍບາຍທີ່ແນໃສ່ປັບປຸງຄຸນນະພາບຊີວິດຂອງສັງຄົມ (ເຊິ່ງແນ່ນອນວ່າໄດ້ລວມເອົາຂະແໜງການເບິ່ງແຍງດູແລນຳ) ເພື່ອກຽມພ້ອມຮັບມືກັບວິກິດໃນອະນາຄົດໄດ້ດີຍິ່ງຂຶ້ນ.

**ຂໍ້ມູນເພີ່ມເຕີມ**:

Irma Mooi-Reci and Barbara J. Risman (2021). “The Gendered Impacts of COVID-19: Lessons and Reflections”. *Gender & Society*, 35 (2), pp. 161-167.

[2] OXFAM (2014). “Working for the Few. Political Capture and Economic Inequality.” Oxfam Briefing Paper 178. OXFAM, Oxford.

University of Basel

Naila Kabeer, Shahra Razavi and Yana van der Meulen Rodgers (2021). “Feminist Economic Perspectives on the COVID-19 Pandemic.” *Feminist Economics*, 27 (1-2), pp. 1-29.